*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 81-89
https://doi.org/10.69692/SUJMRD09081

# A Study on Lao Phuan Vernacular House in Ngan Area, Khoun District, Xieng Khuang Province

**Sinthavone Daravong[1*], Sommany Pathoumxay[2], and Phongern Waenvongthong[3]**

*Faculty of Architecture, National University of Laos, Lao PDR*

***[1]Correspondence:***
*Sinthavone Daravong, Faculty of Architecture, National University of Laos, Tel: +856 20 5259949,*
*E-mail: y.daravong@gmail.com*
*[1,3]Faculty of Architecture, National University of Laos*
*[2] Faculty of Architecture, Souphanouvong University*

***Article Info:***
*Submitted: Jan 06, 2022*
*Revised: Jan 31, 2023*
*Accepted: Feb 13, 2023*

**Abstract**

The study on vernacular houses of the Lao Phuan ethnic group aims to determine the area that still retains most of its original form, as defined by the fieldwork of Ngan area in Khoun District, Xieng Khouang Province as a case study. The selected area is the only one that still has a large number of traditional houses left behind. Through the study of relevant documents, physical surveys with maps and observations, random measurements of house components, and in-depth interviews with village chiefs, the elderly, and residents in the village: These Lao Phuan vernacular houses are designed and built to meet the needs of their occupations and to suit the nature or environment of the area in which they reside. Including their traditions, culture, and way of living. This can be seen from using materials that are easy to find, durable in use, and abundant locally, such as using Longleng wood as a roofing material. In addition, to being a natural sense, it is also an extra sun and rain-resistant material, making it usable for decades. At the same time, the style of the house has long eaves with small windows, which is due to the fact that the area is located in an area with high rainfall. In addition, the stilt house form will be used as a storage area for daily production equipment, firewood, fishing tools, and weaving equipment, as well as for survival and safety conditions. The use of space inside the house, in addition to allocating the area to serve a basic living, also allocated a large hall area to accommodate guests or relatives who visit regularly. Especially when there are traditional events held in the village or gift ceremonies inside the house. Another important point is that the area has to adapt to the dry season (winter). Therefore, two fireplaces have been set up; the first is in the cooking area. The second point is in the living area to use the fireplace to keep warm, the process of building a house still follows the strict traditions and beliefs that have been practiced for a long time.

**Keywords:** *vernacular house, Lao Phuan, architectural element, local material, sustainability*

## 1. ພາກສະເໜີ (Introduction)

ຊົນເຜົ່າລາວພວນແມ່ນໜຶ່ງໃນຈຳນວນຫຼາຍໆ ຊົນເຜົ່າໃນ ສປປ ລາວ, ມີຕົ້ນກຳເນີດ ແລະ ມີການຕັ້ງຖິ່ນຖານຢູ່ເມືອງພວນ ຫຼື ແຂວງຊຽງຂວາງ ມາຕັ້ງແຕ່ດຶກດຳບັນຈົນເຖິງປັດຈຸບັນ (Charles, 1967; Thepsimeuang, 2006). ເປັນຊົນເຜົ່າທີ່ມີຈຸດພິເສດທາງດ້ານວັດທະນະທຳ, ຮີດຄອງປະເພນີ ໃນການດຳລົງຊີວິດທີ່ເປັນເອກະລັກຂອງຕົນເອງ ແລະ ໄດ້ຕິດພັນກັບປະຫວັດສາດ ແລະ ຂະບວນວິວັດການຂະຫຍາຍຕົວ ຂອງຊາດລາວມາເປັນເວລາອັນຊ້ານານ (Lao Writer Prees, 2012; Viravong, 2001).

ແຂວງຊຽງຂວາງ ຍັງມີຄຸນຄ່າດ້ານປະຫວັດສາດຫຼາຍແຫ່ງ ທີ່ງົດງາມ (Division of Research, 2001 ;

Naotuayang, 2012 ; Thepsimeuang, 2003) ຮູບແບບເຮືອນທ້ອງຖິ່ນ ຂອງຊົນເຜົ່າລາວພວນ ກໍ່ແມ່ນໜຶ່ງໃນສະຖາປັດຕະຍະກຳທີ່ມີຈຸດພິເສດ ແລະ ມີເອກະລັກທີ່ແຕກຕ່າງຈາກເຮືອນຊົນເຜົ່າອື່ນໆ ທີ່ມີໃນ ສປປ ລາວ. ຊຶ່ງມີການຈັດສັນພື້ນທີ່ໃຊ້ສອຍທັງພາຍໃນ ແລະພາຍນອກເຮືອນ, ການນຳໃຊ້ວັດສະດຸ ແລະ ຮູບແບບຂອງເຮືອນໃຫ້ເຂົ້າກັບວິຖີຊີວິດຂອງຄົນເອງຫຼາຍທີ່ສຸດ. ໂດຍໄດ້ພິຈາລະນາເຖິງລະບົບນິເວດວິທະຍາ, ສະພາບແວດລ້ອມທາງທຳມະຊາດ ແລະ ວັດທະນະທຳຢ່າງເລິກເຊິ່ງ (Vongvichit, 2012). ໂດຍສະເພາະແມ່ນພິທີກຳ ແລະ ຄະຕິຄວາມເຊື່ອ, ພິທີກຳ ແລະ ປະເພນີ ທີ່ມີຄວາມສຳພັນກັບລັກສະນະຂອງເຮືອນ, ລະບົບການຕັ້ງຖິ່ນຖານ, ລະບົບການວາງຜັງເຮືອນ, ການແບ່ງພື້ນທີ່ໃຊ້ສອຍພາຍໃນ-ພາຍນອກເຮືອນ ແລະ ຂັ້ນຕອນຂອງການກໍ່ສ້າງ. ໂດຍໄດ້ປະຕິບັດສືບເນື່ອງກັນມາເປັນເວລາອັນຍາວນານແຕ່ດຶກດຳບັນຈົນເຖິງປັດຈຸບັນ (Samlamcheak, 1994; Samlamcheak, 1996).

ແຕ່ເນື່ອງຈາກຂະບວນການວິວັດທະນາການຂອງສັງຄົມ ທີ່ມີການຂະຫຍາຍຕົວຕາມການເວລາ ແລະ ການຂະ ຫຍາຍຕົວຂອງເສດຖະກິດ, ເປັນປັດໄຈສຳຄັນເຮັດໃຫ້ຮູບແບບຂອງທີ່ຢູ່ອາໄສທີ່ຄຸນຄ່າດັ່ງກ່າວໄດ້ມີການປ່ຽນແປງໄປ (Bounsom, 1999) ຕາມກະແສການພັດທະນາຢ່າງໄວວາສົມຄວນ (ເອກະສານຈາກຂະແໜງຄົ້ນຄ້ວາ, 2001; ພະແນກແຜນການ ແລະ ການລົງທຶນ ແຂວງຊຽງຂວາງ, 2019; ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງຄູນ ແຂວງຊຽງຂວາງ, 2019) ຊຶ່ງຍັງເຫຼືອພຽງບາງທ້ອງຖິ່ນເທົ່ານັ້ນ ທີ່ຍັງຄົງຮັກສາເອກະລັກດັ້ງເດີມໄວ້ຢູ່. ໃນນັ້ນກໍ່ມີເຂດງານ, ເມືອງຄູນ, ແຂວງຊຽງຂວາງ ຊຶ່ງເປັນເຂດດຽວທີ່ຍັງມີເຮືອນທ້ອງຖິ່ນຫຼົງເຫຼືອຢູ່ເປັນຈຳນວນຫຼວງຫຼາຍ ເນື່ອງຈາກເປັນເຂດທີ່ຢູ່ຫ່າງໄກຈາກຕົວເມືອງ, ເສັ້ນທາງຄົມມະນາຄົມໃນເມື່ອກ່ອນບໍ່ສາມາດເຂົ້າເຖິງໄດ້, ເສດຖະກິດ-ສັງຄົມມີການຂະຫຍາຍຕົວຊັກຊ້າ ເຮັດໃຫ້ຮູບແບບການດຳລົງຊີວິດສ່ວນຫຼາຍຍັງມີລັກສະນະດັ້ງເດີມຢູ່. ດັ່ງນັ້ນ, ຮູບແບບຂອງສະຖາປັດຕະຍະກຳທ້ອງຖິ່ນເຂດດັ່ງກ່າວ ຈຶ່ງມີຄວາມເໝາະສົມຕໍ່ການສຶກສາຄົ້ນຄ້ວາເພື່ອເປັນຂໍ້ມູນພື້ນຖານ, ເປັນແນວທາງໃນການອະນຸລັກ ແລະ ອອກແບບສະຖາປັດຕະຍະກຳຮ່ວມສະໄໝໃນຂັ້ນຕໍ່ໄປ.

ຈຸດປະສົງໃນການຄົ້ນຄວ້າຄັ້ງນີ້ ແມ່ນເພື່ອສຶກສາຮູບແບບເຮືອນຢູ່ອາໄສທ້ອງຖິ່ນຂອງຊົນເຜົ່າລາວພວນທີ່ຢູ່ໃນເຂດງານ, ເມືອງຄູນ, ແຂວງຊຽງຂວາງ ແລະ ເພື່ອສຶກສາຮວບຮວມຂໍ້ມູນກ່ຽວກັບຄວາມເຊື່ອ ແລະຮີດຄອງປະເພນີທີ່ສຳພັນກັບລັກສະນະຂອງເຮືອນ, ລະບົບການຕັ້ງຖິ່ນຖານ, ລະບົບການວາງຜັງເຮືອນ, ການແບ່ງພື້ນທີ່ໃຊ້ສອຍພາຍໃນ-ພາຍນອກເຮືອນ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຮູບແບບເຮືອນທ້ອງຖິ່ນຊົນເຜົ່າລາວພວນຢູ່ເຂດງານ, ເມືອງຄູນ, ແຂວງຊຽງຂວາງ ເປັນບົດຄົ້ນຄວ້າວິທະຍາສາດໜຶ່ງທີ່ສຳຄັນ ທີ່ພົວພັນກັບການສົ່ງເສີມວັດທະນະທຳ ແລະ ການທ່ອງທ່ຽວຂອງຊາດ. ການສຶກສາຮູບແບບທາງສະຖາປັດຕະຍະກຳ ແລະ ຄວາມເຊື່ອເປັນອົງປະກອບສຳຄັນ ທີ່ຈະຕ້ອງໄດ້ພິຈາລະນາ. ການສຶກສາຄັ້ງນີ້ ແມ່ນຈະສຶກສາໃນຮູບແບບຄຸນນະພາບ ໂດຍການເອົາຂໍ້ມູນຈາກທັງສອງດ້ານຄື: ສະຖາປັດຕະຍະກຳ ແລະ ຄົນທ້ອງຖິ່ນ, ທາງດ້ານການເກັບຂໍ້ມູນ ຈາກສະພາບຕົວຈິງອາຄານ ແມ່ນໄດ້ລົງສຳຫຼວດ ແລະ ວັດແທກອາຄານທີ່ຢູ່ອາໄສ ລວມທັງລັກສະນະການຕັ້ງຖິ່ນຖານໃນເຂດງານ. ຈາກນັ້ນ, ກໍ່ໄດ້ດຳເນີນການສຳພາດຕໍ່ກັບຜູ້ຢູ່ອາໄສ ແລະ ເຖົ້າແກ່ແນວໂຮມໃນບ້ານກ່ຽວກັບຄວາມເຊື່ອ ແລະ ຂັ້ນຕອນການປຸກສ້າງທີ່ຢູ່ອາໄສ. ຈາກນັ້ນ ໄດ້ນຳຜົນການສຳພາດ ແລະ ສຳຫຼວດມາສົມທຽບກັບຂໍ້ມູນທາງດ້ານການຄົ້ນຄວ້າທີ່ມີມາກ່ອນ ເພື່ອໃຫ້ເຫັນເຖິງການປ່ຽນແປງໃນແຕ່ລະໄລຍະ.

ເຊິ່ງແມ່ນໄດ້ລົງເລິກສຶກສາລັກສະນະຮູບແບບຂອງເຮືອນ, ສຶກສາການຈັດສັນພື້ນທີ່ໃຊ້ສອຍພາຍໃນເຮືອນ ແລະ ສຶກສາການຈັດສັນພື້ນທີ່ໃຊ້ສອຍຜັງລວມຂອງເຮືອນ ຕາມລາຍລະອຽດລຸ່ມນີ້:

(1) ສັງລວມ ແລະ ສຶກສາຂໍ້ມູນຈາກເອກະສານຕ່າງ ໆ ທີ່ກ່ຽວຂ້ອງ ເພື່ອເປັນຄວາມຮູ້ພື້ນຖານ ແລະ ເປັນແນວທາງໃນການຄົ້ນຄ້ວາວິໄຈ.

(2) ເກັບກຳຂໍ້ມູນພາກສະໜາມ ໂດຍການຮວບຮວມຂໍ້ມູນໃນພື້ນທີ່ສຶກສາດ້ວຍວິທີການສັງເກດ, ສຳພາດ, ຖ່າຍຮູບພາບປະກອບ ແລະແຕ້ມຮູບພາບປະກອບຕາມຄວາມເໝາະສົມ. ໂດຍໄດ້ກຳນົດກຸ່ມຜູ້ໃຫ້ຂໍ້ມູນໄວ້ດັ່ງນີ້:

(3) ນຳເອົາຂໍ້ມູນທີ່ໄດ້ຈາການສຳພາດ, ຮູບຖ່າຍ ແລະຮູບແຕ້ມ ເພື່ອສະຫຼຸບບັນຫາສຳຄັນ ແລະວິເຄາະຕາມປະເດັນທີ່ໄດ້ກຳນົດໄວ້.

ສະເໜີຜົນຂອງການສຶກສາຄົ້ນຄ້ວາໂດຍວິທີພັນລະນາວິເຄາະແລະ ມີຮູບພາບປະກອບ.

## 3. ຜົນໄດ້ຮັບ (Results)

### 3.1 ອີງຕາມວິທີການແບບຄຸນນະພາບເປັນຫຼັກ ແມ່ນໄດ້

ພັນລະນາ ດັ່ງລຸ່ມນີ້:

**1) ຕົ້ນກຳເນີດ ແລະປະຫວັດຄວາມເປັນມາຂອງຊົນເຜົ່າລາວພວນ**

ຮາກເຫງົ້າຊົນເຜົ່າລາວ ແລະ ຊົນເຜົ່າລາວພວນ ມີຕົ້ນກຳເນີດຈາກຕົ້ນຕະກູນດຽວກັນກ່ອນແຍກອອກເປັນຊົນເຜົ່າລາວ ແລະ ຊົນເຜົ່າພວນ ໂດຍມີ ພະເຈົ້າຂຸນບູລົມ ຫຼື ຂຸນບູລົມຣາຊາທິລາດ ທີ່ເປັນເຈົ້າຊີວິດທີ່ຍິ່ງໃຫຍ່ ຂອງຊົນເຜົ່າລາວພວນ ຊຶ່ງນັກປະຫວັດສາດທັງຫຼາຍຍັງບໍ່ສາມາດໃຫ້ລາຍລະອຽດຄວາມກະຈ່າງແຈ້ງໄດ້ວ່າພະອົງເດີນມາຈາກຖິ່ນແດນໃດ, ເປັນລູກຫຼານຂອງໃຜ, ເກີດມາຈາກຊົນຊາດຊົນເຜົ່າໃດກັນແທ້. ຄົນຊົນເຜົ່າພວນ ເຊິ່ງຄັ້ງໜຶ່ງເຄີຍມີອານາຈັກຂອງຕົນເອງໃນອານາບໍລິເວນ ແຂວງຊຽງຂວາງໃນປັດຈຸບັນ ເຖິງວ່າຈະເປັນທີ່ຮູ້ຈັກກັນບໍ່ຫຼາຍກ່ຽວກັບອານາຈັກພວນໃນສະໄໝຕົ້ນຂອງປະຫວັດສາດ, ແຕ່ມັນມີຄວາມເປັນໄປໄດ້ວ່າຊາວພວນເຄີຍສ້າງຕັ້ງອານາຈັກຂອງຕົນໃນດິນແດນບໍລິເວນເຂດທົ່ງໄຫຫີນ ໃນສະໄໝກ່ອນສົມເດັດເຈົ້າຟ້າງຸ່ມ ໄດ້ເຕົ້າໂຮມ ອານາຈັກລ້ານຊ້າງ ໃນປີ ຄສ 1353, ເຂົາເຈົ້າເອີ້ນຊື່ອານາຈັກຂອງເຂົາເຈົ້າວ່າ ເມືອງຊຽງຂວາງ ໂດຍມີ ເມືອງຄູນ ປັດຈຸບັນເປັນເມືອງເອກ ແລະໄດ້ດຳລົງຊີວິດຢູ່ອານາຈັກແຫ່ງນີ້ດ້ວຍຄວາມສາມັກຄີຮັກແພງກັນ ຈົນເຖິງໄລຍະທີ່ອິດທິພົນຂອງຕ່າງດ້າວເຂົ້າມາຮຸກຮານຢ່າງໜັກໜ່ວງຫຼາຍຄັ້ງ-ຫຼາຍຄາວ ເຊັ່ນ: ໃນຊ່ວງໄລຍະຕົ້ນສະຕະວັດທີ XIX ປະຊາກອນຂອງອານາຈັກຊາວພວນຖືກທຳລາຍຢ່າງໜັກໜ່ວງຈາກສັກດິນາສະຫຍາມ. ໄລຍະຕໍ່ມາ ໃນລະຫວ່າງເຄິ່ງສະຕະວັດ XIX, ກອງປະກອບອາວຸດຊາວຫໍ້ໄດ້ຂີ່ມ້າລຸລັ່ງລົງມາຈາກ ແຂວງຢູນານ ເພື່ອມາປຸ້ນເອົາວັດຖຸສິ່ງຂອງ, ເຊັ່ນຂ້າຜູ້ຄົນ ເຊິ່ງນັບວ່າ ເປັນທີ່ໂຫດຮ້າຍປ່າເຖື່ອນຕໍ່ປະຊາຊົນໃນຂົງເຂດນີ້ (ປຶ້ມ "ລາຊະອານາຈັກທັງມວນຂອງລາວ" THE KINGDOMS OF LAOS). ເມືອງຊຽງຂວາງໄດ້ຫຼຸດພົ້ນອອກຈາກພົນຮ້າຍຂອງກຸ່ມໂຈນຫໍ້ ໃນສະຕະວັດທີ XIX, ຈາກນັ້ນ ພວກລ່າເມືອງຂຶ້ນຝຣັ່ງ ກໍ່ໄດ້ເຂົ້າມາຮຸກຮານ ແລະ ຕໍ່ມາພັດມາຖືກທຳລາຍໜັກຈາກລູກລະເບີດຂອງຈັກກະພັດອາເມລິກາ ໃນສະໄໝສົງຄາມລະຫ່ວາງປີ 1967-1970, ພາຍຫຼັງສົງຄາມສິ້ນສຸດລົງ ເມືອງໂພນສະຫວັນ ຈຶ່ງກາຍເປັນເມືອງເອກຂອງ ແຂວງຊຽງຂວາງ. ປັດຈຸບັນຊົນເຜົ່າລາວພວນ ແມ່ນແຂງໜຶ່ງຂອງຊົນເຜົ່າລາວ ທີ່ນອນຢູ່ໃນວົງຄະນາຍາດແຫ່ງຊາດລາວ ເຊິ່ງໂດຍສ່ວນໃຫຍ່ໄດ້ຕັ້ງພູມລຳເນົາ ແລະດຳລົງຊີວິດຢູ່ ແຂວງຊຽງຂວາງ. ນອກຈາກນີ້, ຍັງມີຈຳນວນໜຶ່ງຢູ່ ແຂວງຫົວພັນ, ອຸດົມໄຊ, ຫຼວງນ້ຳທາ, ຫຼວງພະບາງ, ແຂວງວຽງຈັນ, ນະຄອນຫຼວງວຽງຈັນ ແລະ ແຂວງບໍລິຄຳໄຊ ໂດຍສະເພາະແມ່ນເຂດລ້ອງແມ່ນ້ຳງື່ມ.

**2) ດ້ານຫົວຄິດປະດິດສ້າງ**

ຊົນເຜົ່າລາວພວນເປັນຊົນເຜົ່າທີ່ດຸໝັ່ນອອກແຮງງານ, ຮູ້ປະດິດເຄື່ອງນຸ່ງຫົ່ມຕາມແບບຂອງປູ່ຍ່າຕາຍາຍຂອງຕົນປະໄວ້, ຮູ້ຂຸດເອົາບໍ່ເຫຼັກອັນເປັນຄວາມຮັ່ງມີຊະນິດໜຶ່ງມາເປັນເຄື່ອງມືເພື່ອທຳມາຫາກິນ, ຮູ້ຈັກນຳເອົາໄມ້ມາສານເຮັດກະຕ່າກະບຸງ ແລະ ເຄື່ອງໃຊ້ສອຍອື່ນໆ ຕາມເອກະລັກຮູບແບບຂອງຕົນເອງ, ຮູ້ປະດິດມວຍລາຍຕາມແບບຂອງຕົນ ເພື່ອໃຊ້ປ້ອງກັນຕົວ, ຮູ້ປະດິດຂຸ່ຍ, ຊໍ ແລະ ແຄນ, ຮູ້ຂັບລຳດ້ວຍສຽງ ແລະ ຄຳພະຫຍາ, ຮູ້ໃຊ້ເຄື່ອງປະດັບເອ້ດ້ວຍເງິນ ແລະ ຄຳ ທີ່ຜູ້ຊາຍປະດິດຂຶ້ນເອງ, ມີຄວາມສະຫຼາດສະຫຼຽວ, ຮູ້ປະດິດຄິດແຕ່ງ, ຮູ້ໃຊ້ຄຳພະຫຍາຍ່ອຍເພື່ອຕອບໝໍລຳຜູ້ຊາຍ ໂດຍສາມາດລຳຕໍ່ສູ້ກັນໄດ້ຫຼາຍມື້ຫຼາຍຄືນ ແລະ ຮູ້ໄຖນາ, ຄາດນາ, ດຳນາ, ກ່ຽວເຂົ້າ, ກອງເຂົ້າຄຽງຄູ່ກັບຜູ້ຊາຍ. ພະສົງທີ່ບວດໃນພຸດທະສາສະໜາໄດ້ຮູ້ຄົ້ນຄວ້າພະທຳວິໄນ ຈົນສາມາດແປພາສາບາລີອອກມາເປັນພາສາລາວ, ເຮັດປະຕິທິນແຕ່ລະປີຢ່າງຖືກຕ້ອງ. ນອກຈາກນັ້ນ, ຜູ້ຊາຍຍັງມີພອນສະຫວັນໃນການແຕ້ມດອກດວງ, ດອກໄມ້, ປັ້ນດິນຈີ່ ດິນຂໍສ້າງວັດວາອາຮາມອັນມີລວດລາຍງົດງາມ ແລະ ຫຼໍ່ພຸດທະຮູບຕ່າງໆ ຢ່າງບໍ່ຄືກັບເຂດອື່ນ. ເຄື່ອງມືຖາງປ່າໄມ້, ງ້າວສຳລັບປ້ອງກັນຕົວທີ່ມີຊື່ສຽງ, ຕຶບສຳລັບຕໍ່ເອົາໄກ່ປ່າ, ຕຶບສຳລັບຫ້າງເພື່ອຈັບເອົານົກຕູ່, ນົກເຂົາ, ແຮ້ວສຳລັບໃສ່ຈັບນົກ ແລະ ກະທົບສຳລັບໃສ່ຈັບເອົາສັດນ້ອຍທີ່ບໍ່ຄືກັບຂອງຄົນອື່ນ ຫຼື ຊົນເຜົ່າອື່ນ.

**3) ດ້ານການນຸ່ງຖື**

ກ່ອນໜ້ານີ້ປະມານ 100 ປີ ຊົນເຜົ່າລາວພວນມີການນຸ່ງຫົ່ມຄື: ຜູ້ຊາຍມັກນຸ່ງຜ້າກ້ອມ, ເສື້ອຄໍມົນ (ຖ້າເປັນຄົນແກ່ຊະລາ) ສ່ວນບ່າວໜຸ່ມນຸ່ງໂສ້ງ 3 ປູນ, ນຸ່ງເສື້ອບ້າວ. ສ່ວນແມ່ຍິງນຸ່ງສິ້ນໄໝ, ສິ້ນມຸກ, ສິ້ນຝ້າຍ, ນຸ່ງເສື້ອຄໍມົນ, ເສື້ອອ້ຽງທີ່ໃສ່ກະດຸມໄມ້ (ແບບໄມ້ຂັດເອົາ) ສ່ວນແພທີ່ເອົາມາຕັດໂສ້ງ, ເສື້ອນັ້ນແມ່ນເຮັດດ້ວຍຕົນເອງເພາະແຕ່ລະເຮືອນມີສວນຝ້າຍ ແລະ ສວນມອນ.

**4) ພາສາປາກເວົ້າ**

ຊົນເຜົ່າລາວພວນສ່ວນຫຼາຍໃນປັດຈຸບັນແມ່ນໃຊ້ພາສາລາວ ທັງພາສາເວົ້າ ແລະ ພາສາຂຽນ. ແຕ່ກໍ່ມີພາສາເວົ້າທີ່ມີຖ້ອຍຄຳ ແລະ ສຳນຽງທີ່ເປັນເອກະລັກສະເພາະຂອງຕົນເອງ, ສ່ວນພາສາຂຽນໃນອະດີດແມ່ນນິຍົມໃຊ້ໂຕໜັງສືທຳ.

**5) ສິລະປະພື້ນເມືອງ**

ຊົນເຜົ່າລາວພວນ ມີມູນເຊື້ອທາງດ້ານສີລະປະວັນນະຄະດີມາແຕ່ສະໄໝບູຮານນະການ, ເຄື່ອງດົນຕີຂອງເຜົ່າລາວພວນມີ: ແຄນ, ປີ່, ຊໍຢ, ກອງ, ຄ້ອງ, ແຊ່ງ. ສ່ວນການຂັບລຳທີ່ມີຊື່ສຽງ ໄດ້ຮັບຄວາມນິຍົມຢ່າງກ້ວາງຂວາງ ແລະ ເປັນເອກະລັກສະເພາະແມ່ນ: ຂັບລຳຊຽງຂວາງ, ລຳຕອບກັນໃນງານຕ່າງໆ ເຊັ່ນ: ງານດອງ, ງານບຸນ ແລະ ອື່ນໆ.

**6) ອາຊີບ ແລະ ການຜະລິດຂອງຊົນເຜົ່າລາວພວນ**

ການທຳມາຫາກິນຂອງຊົນເຜົ່າລາວພວນໃນເມື່ອກ່ອນ ແມ່ນຢູ່ກິນແບບງ່າຍດາຍ ເພາະໄດ້ຖືເອົາການເກັບຜັກຫັກໜໍ່, ຫາປູຫາປາເປັນການລ້ຽງຊີບປະຈຳວັນຂອງຕົນເອງ. ເມື່ອສຳເລັດຈາກການເຮັດນາແລ້ວແມ່ນມີການແບ່ງວຽກກັນຄື: ວຽກຕັກນ້ຳ, ໜື້ງເຂົ້າ, ຕຳຫູກ, ເອົາລູກ ແລະ ຕັດຫຍິບ ນີ້ແມ່ນຖືວ່າເປັນວຽກຂອງແມ່ຍິງ. ສ່ວນວຽກຂອງຜູ້ຊາຍແມ່ນຕ້ອງຮັບຜິດຊອບວຽກໜັກ ເຊັ່ນ: ການໄຖນາ, ການຕັດໄມ້ເຮັດເຮືອນ, ການປຸກເຮືອນ, ປຸກເລົ້າເຂົ້າ, ຫາປູຫາປາ ແລະ ການຮັກສາສັດລ້ຽງເປັນຕົ້ນແມ່ນ ງົວ, ຄວາຍ ແລະ ມ້າ. ສ່ວນຜູ້ເຖົ້າແມ່ນມີໜ້າທີ່ເບິ່ງລູກເບິ່ງຫຼານ ບາງຄົນກໍສານກະບຸງກະຕ່າ, ສານພາເຂົ້າຫວາຍ ແລະ ຝຸກ (ສາດເຮັດດ້ວຍຜື) ແຕ່ຕົກມາປັດຈຸບັນນີ້ແມ່ນຊ່ວຍກັນເຮັດວຽກທຸກຢ່າງໃນຄອບຄົວ ສ່ວນລູກແມ່ນມີໜ້າທີ່ຊ່ວຍເຫຼືອພໍ່ແມ່ເຮັດວຽກຕ່າງໆ.

## 3.2 ກໍລະນີສຶກສາເຮືອນທ້ອງຖິ່ນຊົນເຜົ່າລາວພວນ ຢູ່ເມືອງຄູນ, ແຂວງຊຽງຂວາງ

**1) ບັນດາໝູ່ບ້ານ ກໍລະນີສຶກສາ**

ບ້ານກໍລະນີສຶກສາປະກອບດ້ວຍ: ບ້ານຫີນໂງ່ນຄຸ້ມ 1, ບ້ານຫີນໂງ່ນຜັກແອກ, ບ້ານເມືອງ ແລະ ບ້ານກາງນາ. ລັກສະນະການວາງແຜນຜັງລວມຂອງບ້ານໃນພື້ນທີ່ກໍລະນີສຶກສາເຫັນວ່າ ແຕ່ລະບ້ານມີຄວາມແຕກຕ່າງກັນ, ຊຶ່ງຂຶ້ນກັບທິດຂອງແສງຕາເວັນ, ລັກສະນະພູມສັນຖານຂອງທີ່ຕັ້ງ, ແລະ ໂຄງສ້າງເສັ້ນທາງທີ່ໄດ້ສ້າງເຂົ້າໄປໃນບໍລິເວນພື້ນທີ່ດັ່ງກ່າວ. ໂດຍສ່ວນໃຫຍ່ຫັນໜ້າເຮືອນໄປທາງທິດຕາເວັນອອກ, ຫຼື ທິດຕາເວັນອອກສຽງເໜືອ ເນື່ອງຈາກມີຄະຕິຄວາມເຊື່ອທີ່ວ່າ ການຫັນໜ້າເຮືອນໄປຕາມທິດດັ່ງກ່າວແມ່ນເພື່ອຮັບໂຊກລາບ, ຄອບຄົວມີຄວາມຜາສຸກ, ທຸກຢ່າງມີແຕ່ຂຶ້ນ-ແຕ່ເກີນ ຫຼື ຫັນໜ້າເຮືອນໃສ່ທາງລົດ ເພື່ອຄວາມສະງ່າງາມ. ຮູບແບບດັ່ງກ່າວໄດ້ສະທ້ອນໃຫ້ເຫັນພາບລວມຂອງການຈັດວາງແຜນຜັງລວມບ້ານ ທີ່ສອດຄ່ອງກັບລັກສະນະສະພາບແວດລ້ອມຂອງພື້ນທີ່, ການນຳໃຊ້ປະໂຫຍດ ແລະ ການດຳລົງຊີວິດໃນສະພາບແວດລ້ອມທີ່ມີຄວາມແຕກຕ່າງກັນທາງດ້ານທີ່ຕັ້ງ ແລະ ຍັງສະທ້ອນໃຫ້ເຫັນການລົງຕົວ ແລະ ກົມກືນຂອງການຈັດວາງຜັງລວມທີ່ມີອົງປະກອບພື້ນຖານຫຼັກ (ຮູບພາບທີ 4) ເຊັ່ນ ກຸ່ມເຮືອນທີ່ອ້ອມຮອບດ້ວຍພື້ນທີ່ທົ່ງນາທີ່ເອື້ອອຳນວຍໃຫ້ການປະກອບອາຊີບລັກຂອງການດຳລົງຊີວິດ ແລະ ແຫຼ່ງທຳມາຫາກິນອື່ນໆ ຕາມທຳມະຊາດທີ່ມີຢູ່ຢ່າງຫຼວງຫຼາຍສົມຄວນ.

**2) ລັກສະນະຮູບແບບໂດຍລວມຂອງເຮືອນ**

ລັກສະນະພາຍນອກຂອງເຮືອນ ເປັນເຮືອນຮ້ານເສົາຕັ້ງທີ່ເຮັດດ້ວຍໄມ້ໂລງເລງ, ມີກ້ອງຕະລ່າງສູງປະມານ 1.6 ແມັດ. ເສົາເຮືອນເປັນເສົາໄມ້ ມີທັງເສົາ 4 ລ່ຽມ ແລະ ເສົາຮູບຊົງເປັນຫຼາຍລ່ຽມ ລັກສະນະຂອງຕີນເສົາສ່ວນຫຼາຍຈະເປັນຫີນທີ່ເອົາມາຈາກແມ່ນ້ຳ ໂດຍການນຳມາວາງເທິງພື້ນດິນມີຄວາມໜາປະມານ 20-30 ຊມ. ພື້ນແມ່ນປູດ້ວຍແປ້ນໄມ້ໂລງເລງທີ່ມີຄວາມກ້ວາງ 0.2 ແມັດ ແລະ ຍາວ 2.5 ເຖິງ 3 ແມັດ. ຝາເຮືອນສູງປະມານ 2.5 ແມັດ ແອ້ມດ້ວຍໄມ້ແປ້ນຕັດກັນລະຫ່ວາງສ່ວນເທິງວາງເປັນລວງຕັ້ງ ແລະ ສ່ວນລຸ່ມວາງເປັນລວງຂວາງເລື່ອມກັນເລັກນ້ອຍເພື່ອກັນບໍ່ໃຫ້ນ້ຳຝົນສາມາດໄຫຼເຂົ້າຂ້າງໃນເຮືອນ, ຫຼັງຄາມີຄວາມເທີບຊັນພໍສົມຄວນ ເພື່ອເຮັດໃຫ້ນ້ຳສາມາດລະບາຍອອກຫຼັງຄາໄດ້ໄວ, ເນື່ອງຈາກເຂດດັ່ງກ່າວລະດູຝົນມີຝົນຕົກຫຼາຍພໍສົມຄວນ, ວັດສະດຸມຸງຫຼັງຄາສ່ວນໃຫຍ່ແມ່ນມຸງດ້ວຍໄມ້ແປ້ນເກັດຈາກໄມ້ໂລງເລງ ແລະ ບາງຫຼັງກໍ່ມຸງດ້ວຍຫຍ້າ. ບາງຫຼັງກໍ່ມຸງດ້ວຍຫຍ້າຄາ. ສຳຫຼັບສີໜ້າເຮືອນບາງຫຼັງທີ່ມຸງດ້ວຍຫຍ້າ ຈະເຮັດເປັນຮູບກົ່ງໂຄ້ງ, ນອກຈາກເພື່ອຄວາມສວຍງາມຂອງຮູບຊົງຫຼັງຄາແລ້ວ, ຍັງເພື່ອເຮັດໃຫ້ຫຼັງຄາກວມພື້ນທີ່ໃຊ້ສອຍກ້ວາງຂຶ້ນ. ລັກສະນະຮູບແບບຂອງຝາເຮືອນຈະຕີຝາໄມ້ທາງຕັ້ງ. ຢູ່ບໍລິເວນຝາມັກຈະເຈາະປ່ອງຢ້ຽມຢູ່ທາງດ້ານໜ້າ ແລະ ທາງດ້ານຂ້າງຂອງເຮືອນ ຊຶ່ງປ່ອງຢ້ຽມດັ່ງກ່າວເຫັນວ່າມີຂະໜາດນ້ອຍເພື່ອບໍ່ໃຫ້ລົມໜາວພັດຜ່ານເຂົ້າມາພາຍໃນເຮືອນ. ຢູ່ດ້ານຂ້າງຂອງເຮືອນປະກອບມີຂັ້ນໄດຂຶ້ນລົງຢູ່ 2 ຈຸດຄື: ຈຸດທີໜຶ່ງ ຢູ່ບໍລິເວນໜ້າເຮືອນ ຊຶ່ງເປັນທາງຂຶ້ນຫຼັກຂອງຄົນພາຍໃນເຮືອນ ແລະ ເພື່ອສຳຫຼັບແຂກຄົນທີ່ມາຢ້ຽມຢາມ. ສຳຫຼັບຈຸດທີສອງ ແມ່ນຢູ່ບໍລິເວນເຮືອນຄົວ ຊຶ່ງເປັນທາງຂຶ້ນສະເພາະຄົນພາຍໃນຄອບຄົວໂດຍສະເພາະແມ່ນໃຊ້ເຊື່ອມຕໍ່ກັບກິດຈະກຳແຕ່ງຢູ່ຄົວກິນ ແລະ ກິດຈະກຳວຽກສວນຄົວຕ່າງໆ. ສຳລັບລູກຂັ້ນໄດແມ່ນຈະເຮັດເປັນຈຳນວນເລກຄີກຕາມຄະຕິຄວາມເຊື່ອທີ່ວ່າ ຄີກຢູ່-ຄູ່ໜີ.

**3) ລັກສະນະການຈັດວາງແຜນຜັງທີ່ຕັ້ງຂອງເຮືອນ**

ແຜນຜັງທີ່ຕັ້ງຂອງເຮືອນຊົນເຜົ່າລາວພວນມີອົງປະກອບຕ່າງໆ ດັ່ງນີ້: ເດີ່ນບ້ານ ທີ່ຢູ່ບໍລິເວນທາງດ້ານໜ້າ

ຂອງເຮືອນ ເປັນພື້ນທີ່ເຊື່ອມຕໍ່ກັບຫົນທາງ ແລະ ພື້ນທີ່ເຮືອນຂ້າງຄຽງ ທີ່ມີພື້ນທີ່ກ້ວາງຂວາງພໍສົມຄວນນຳໃຊ້ເປັນບ່ອນເຮັດກິດຈະກຳຕ່າງໆ ໂດຍສະເພາະແມ່ນໃນເວລາມີບຸນ-ມີງານຕ່າງໆ ພາຍໃນຄອບຄົວ, ບ່ອນຕັ້ງຕົວເຮືອນ, ເລົ້າເຂົ້າທີ່ຕັ້ງຫ່າງຈາກຕົວເຮືອນເລັກນ້ອຍ, ຄອກສັດລ້ຽງເປັນຕົ້ນແມ່ນ ຄອກງົວ-ຄວາຍ, ຄອກໝູ, ຄອກເປັດ ແລະ ໄກ່ ທີ່ຕັ້ງຢູ່ພາກສ່ວນດ້ານຫຼັງ ຫຼື ດ້ານຂ້າງຂອງເຮືອນ. ນອກນັ້ນຍັງມີພື້ນທີ່ສວນປູກຕົ້ນໄມ້ກິນໝາກ ໂດຍສະເພາະແມ່ນໝາກໄມ້ທ້ອງຖິ່ນເຊັ່ນ ໝາກໝັ້ນ, ໝາກຄາຍ, ໝາກຈອງ ແລະ ຍັງມີໄມ້ໄຜ່, ບາງເຮືອນກໍ່ມີພື້ນທີ່ສຳລັບສວນຄົວ ແລະ ອື່ນໆ. ໂດຍແມ່ນເຮືອນເປັນອົງປະກອບຫຼັກ (ຮູບພາບທີ 1).

**4) ການນຳໃຊ້ພື້ນທີ່ຂອງເຮືອນ**

ລັກສະນະການໃຊ້ພື້ນທີ່ຂອງເຮືອນ ຈະແບ່ງພື້ນທີ່ການໃຊ້ສອຍເປັນສັດສ່ວນທີ່ຊັດເຈນ ຊຶ່ງພື້ນທີ່ສ່ວນໃຫຍ່ຈະເປັນຫ້ອງໂຖງລວມ ໃຊ້ເພື່ອເປັນບ່ອນກິນເຂົ້າ, ຮັບແຂກ ແລະພັກຜ່ອນ. ຮອງລົງມາຈະເປັນເຂດຫ້ອງນອນ ຊຶ່ງຄຳສັບທ້ອງຖິ່ນເອີ້ນວ່າ "ສ້ອມ" ປະກອບມີ 3 ຫ້ອງຄື: ຫ້ອງນອນພໍ່ແມ່, ຫ້ອງນອນລູກສາວ 2 ຫ້ອງ (ຮູບພາບທີ 7). ສຳລັບບ່ອນນອນຂອງລູກຊາຍຈະແຍກອອກຕ່າງຫາກທີ່ຕິດກັບຫ້ອງໂຖງໂດຍບໍ່ມີຝາແອ້ມ ຊຶ່ງຄຳສັບທ້ອງຖິ່ນເອີ້ນວ່າ "ຫ້ອງຫ່ອງ". ສຳລັບເຂດເຕົາໄຟຈະປະກອບມີ 2 ເຕົາ ຄື ເຕົາໃຊ້ສຳລັບຄົວກິນ ແລະ ເຕົາໄຟໃຊ້ສຳລັບຜິງໃນລະດູໜາວໂດຍສະເພາະ. ນອກຈາກນັ້ນ ຍັງມີບ່ອນເກັບມ້ຽນເຄື່ອງໃຊ້ພາຍໃນເຮືອນ, ເຂດເຊຍທີ່ຢູ່ບໍລິເວນທາງຂຶ້ນດ້ານໜ້າຂອງເຮືອນ ແລະ ເຂດຊານນ້ຳ. ສຳລັບກ້ອງຕະລ່າງເຮືອນທີ່ມີການຍົກສູງພໍສົມຄວນ ໃນສະໄໝກ່ອນແມ່ນໃຊ້ເປັນຄອກສັດລ້ຽງປະເພດງົວ-ຄວາຍ. ແຕ່ສຳລັບໃນປັດຈຸບັນ ແມ່ນເພື່ອໃຊ້ເປັນບ່ອນເກັບມ້ຽນຟືນດັງໄຟທີ່ມີການເກັບທ້ອນໄວ້ເປັນຈຳນວນຫຼາຍພໍສົມຄວນ, ເກັບມ້ຽນໄມ້ທີ່ເອົາມາທ້ອນໂຮມໄວ້ສຳລັບກຽມປຸກເຮືອນໃໝ່, ເກັບມ້ຽນເຄື່ອງປະເພດຮັບໃຊ້ແກ່ການຜະລິດ ເຊັ່ນ ຄາດ-ໄຖ, ຈົກ-ຊ້ວນ, ກະຕ່າ-ກະບຸງ, ພ້ອມທັງເປັນບ່ອນເກັບມ້ຽນອຸປະກອນໃຊ້ສຳລັບຫາປາ, ເປັນບ່ອນຕັ້ງຄົກຕຳເຂົ້າ ຫຼື ຄຳສັບທ້ອງຖິ່ນເອີ້ນວ່າຄົກມອງ ແລະ ໃຊ້ເປັນບ່ອນເຮັດກິດຈະກຳຫັດຖະກຳຕ່າງໆ ເຊັ່ນ: ຈັກສານ, ຂັວດແກະສະລັກຕ່າງໆ. ສຳລັບຫ້ອງນ້ຳ ຊຶ່ງຄຳສັບທ້ອງຖິ່ນເອີ້ນວ່າ "ຊຸມວິດ" ແມ່ນເຮັດເປັນຕູບນ້ອຍແຍກອອກຈາກເຮືອນຕ່າງຫາກ.

## 4. ວິພາກຜົນ (Discussion)

ອົງປະກອບທາງດ້ານສະຖາປັດຕະຍະກຳຂອງຊົນເຜົ່າລາວພວນ ແມ່ນມີຄວາມສຳພັນກັບສະພາບແວດລ້ອມພາຍນອກເປັນຫຼັກ. ການຕັ້ງຖິ່ນຖານ ແມ່ນເຫັນວ່າມີການຢູ່ກັນແບບຮ່ວມກຸ່ມ (Custer pattern) ເຊິ່ງມີຄວາມກົງກັບເນື້ອໃນບົດຄວາມຂອງທ່ານ ທີ່ໄດ້ອະທິບາຍໂດຍລວມກ່ຽວກັບການຕັ້ງຖິ່ນຖານ ແລະ ເຮືອນຂອງຊົນເຜົ່າລາວພວນໃນຂົງເຂດອາຊີບ ເຊິ່ງອົງປະກອບຫຼັກໃນການເລືອກທີ່ຕັ້ງເພື່ອສ້າງຊຸມຊົນລາວພວນ ແມ່ນຂຶ້ນກັບການປະຕິວັດທາງດ້ານກະສິກຳ ແລະ ລັກສະນະພູມສັນຖານ ເພື່ອປັດໄຈການດຳລົງຊີວິດ (Samlamcheak, 1994). ລັກສະນະຂອງສະຖາປັດຕະຍະກຳ ແມ່ນມີລະບຽງປ່ອງເປີດຂ້ອນຂ້າງໜ້ອຍ ເຊິ່ງອາດຈະບໍ່ກ່ຽວກັບຄວາມເຊື່ອກ່ຽວກັບສາສະໜາແຕ່ຢ່າງໃດ ເພາະເຫດຜົນຂອງບາງຊົນເຜົ່າ ຍັງພົວພັນເຖິງການເກີດ ການຕາຍ ໃນສາສະໜາອີກດ້ວຍ. ໃນການຄົ້ນຄວ້ານີ້ ເຫັນວ່າ ເປັນຍ້ອນສະພາບທີ່ຕັ້ງ ແລະ ດິນຟ້າອາກາດໃນເຂດດັ່ງກ່າວ ທີ່ມີອາດໜາວເຢັນ ເຮັດໃຫ້ການນຳໃຊ້ແສງທຳມະຊາດ (Natural light) ໜ້ອຍ ແລະ ການນຳໃຊ້ພື້ນທີ່ຮັບອາກາດກາງແຈ້ງ (Open Space Interanion) ຫຼື ເດີ່ງກາງ ຈ້າງຖືກຈຳກັດ. ຈາກຜົນຂອງການສຳຫຼວດສະພາບກາຍະພາບດັ່ງກ່າວ ແມ່ນມີຄວາມໃກ້ຄຽງກັບການອະທິບາຍຂອງ Vongvised ທີ່ລະບຸໄວ້ໃນເອກະສານໄທພວນ ທີ່ສຶກສາໃຫ້ເຫັນວ່າ ຂົງເຂດທີ່ຕັ້ງ ແລະ ພູມອາກາດ ເປັນປັດໄຈຫຼັກ ທີ່ເປັນຜົນກະທົບດ້ານຮູບຊົງສະຖາປັດຕະຍະກຳແບບລາວພວນ (Somboun, 1999; Vongvised, 2000). ການທີ່ຈະວາງແຜນອະນຸລັກ ແລະ ສົ່ງເສີມປະເພນີຂອງລາວພວນ ໃຫ້ສືບເນື່ອງໄດ້ ມັນອາດຈະມີຄວາມຈຳເປັນທີ່ຈະຕ້ອງສ້າງແຮງຈູງໃຈໃຫ້ແກ່ຜູ້ຢູ່ອາໄສຮັບຮູ້ເຖິງຄຸນຄ່າຂອງ ສະຖາປັດຕະຍະກຳ ແລະ ຄຸນຄ່າດ້ານຄວາມເຊື່ອ ເພື່ອໃຫ້ມີການພັດທະນາຊີວິດການເປັນຢູ່ໃຫ້ຍືນຍົງໃນຕໍ່ໜ້າ.

## 5. ສະຫຼຸບ (Conclusion)

ເຮືອນທ້ອງຖິ່ນຊົນເຜົ່າລາວພວນໃນກໍລະນີສຶກສາດັ່ງກ່າວ ເຫັນວ່າໄດ້ມີຂັ້ນຕອນຕ່າງໆ ຢ່າງມີລາຍລະອຽດເລີ່ມຈາກການເລືອກຈຸດທີ່ຕັ້ງບ້ານໃຫ້ຢູ່ໃນພື້ນທີ່ ທີ່ມີຄວາມປອດໄພຈາກໄພທຳມະຊາດ ແລະ ປັບຄົວກັບສະພາບບໍລິບົດທີ່ຕັ້ງ, ຢູ່ໃນບ່ອນທີ່ມີຄວາມສະດວກໃນການທຳການຜະລິດ ແລະ ການຊອກຢູ່ຫາກິນໃນທຳມະຊາດ, ໄດ້ມີພູມປັນຍາແບບທ້ອງຖິ່ນໃນການອອກແບບ ແລະ ກໍ່ສ້າງເຮືອນໃຫ້ສອດຄ່ອງກັບສະພາບແວດລ້ອມຂອງທ້ອງຖິ່ນເປັນຢ່າງດີ, ໄດ້ນຳໃຊ້ວັດສະດຸທີ່ຫາງ່າຍ ແລະ ມີຢ່າງອຸດົມສົມບູນໃນທ້ອງຖິ່ນ. ສຳລັບຂັ້ນຕອນການປຸກສ້າງເຮືອນແມ່ນໄດ້ປະຕິບັດຕາມຄວາມເຊື່ອຖືດ້ານຮີດຄອງປະເພນີ

ຂອງທ້ອງຖິ່ນຢ່າງເຄັ່ງຂັດ ເລີ່ມແຕ່ຂັ້ນຕອນການການຈັດຫາວັດສະດຸ, ການເລືອກພື້ນທີ່, ການຈັດວາງທິດຂອງເຮືອນ, ຕະຫຼອດເຖິງການຈັດສັນພື້ນທີ່ໃຊ້ສອຍພາຍໃນເຮືອນ.

ເຮືອນທ້ອງຖິ່ນເຂດດັ່ງກ່າວຍັງມີລັກສະນະທາງສະຖາປັດຕະຍະກຳທີ່ສະທ້ອນເຖິງວິຖີການດຳລົງຊີວິດຂອງເຂົາເຈົ້າຢ່າງແທ້ຈິງ ຊຶ່ງມັນສະແດງອອກຢູ່ໃນການໃຊ້ພື້ນທີ່ແບບລຽບງ່າຍ ແລະ ຕອບສະໜອງຕໍ່ກິດຈະກຳການດຳລົງຊີວິດ ຫຼື ອາຊີບທີ່ເປັນຕົ້ນຕໍ, ຊຶ່ງປະຊາຊົນເກືອບທັງໝົດແມ່ນປະກອບອາຊີບທຳການຜະລິດປູກຝັງ ແລະ ລ້ຽງສັດເປັນຕົ້ນຕໍ.

ຄວນມີການເຜີຍແຜ່ການວິໄຈດັ່ງກ່າວນີ້ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ໂດຍສະເພາະແມ່ນໃນຂະແໜງການກໍ່ສ້າງ ແລະ ສະຖາບການສຶກສາທາງດ້ານການອອກແບບ ແລະ ກໍ່ສ້າງອາຄານ ເພື່ອນຳເອົາຂໍ້ມູນເຫຼົ່ານີ້ໄປປະຍຸກໃຊ້ໃນການອະນຸລັກ ແລະ ພັດທະນາກ່ຽວກັບການກໍ່ສ້າງທີ່ຢູ່ອາໄສໃຫ້ເໝາະສົມກັບສະພາບແວດລ້ອມ, ວັດທະນາທຳທ້ອງຖິ່ນ ແລະ ວິຖີການດຳລົງຊີວິດຂອງຜູ້ຢູ່ອາໄສໃນປັດຈຸບັນ. ພາກສ່ວນທີ່ກ່ຽວຂ້ອງຄວນເພີ່ມທະວີໃຫ້ປະຊາຊົນໃນທ້ອງຖິ່ນໄດ້ຮູ້ເຖິງຄຸນຄ່າ ແລະ ຄວາມໝາຍ, ຄວາມສຳຄັນຂອງຄຸນຄ່າສະຖາປັດຕະຍະກຳທ້ອງຖິ່ນ ຊຶ່ງເປັນພູມປັນຍາທ້ອງຖິນໄດ້ປະດິດຄິດສ້າງໄວ້, ພ້ອມທັງຊ່ວຍກັນອະນຸລັກຮັກສາໃຫ້ເປັນມໍລະດົກສືບຕໍ່ໄປ. ຄວນມີການສຶກສາວິໄຈເຮືອນທ້ອງຖິ່ນໃນເຂດອື່ນ ໆ ເພື່ອເປັນການປຽບທຽບ ແລະ ເປັນການທ້ອນໂຮມຄຸນຄ່າຂອງແນວຄວາມຄິດຄົນສະໄໝກ່ອນ ໃນການຄິດຄົ້ນອອກແບບສ້າງບ້ານເຮືອນໃຫ້ສອດຄ່ອງກັບສະພາບແວດລ້ອມ, ມີປະໂຫຍດຕໍ່ການນຳໃຊ້ ແລະ ມີຄຸນຄ່າທາງດ້ານວັດທະນາທຳຂອງທ້ອງຖິ່ນໃຫ້ຢູ່ກັບຄົນລາວຢ່າງຍືນຍົງ.

## 6. ຂໍ້ຂັດແຍ່ງ

ທີມງານຂອງພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍຢັ້ງຢືນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ທີມງານຂອງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ


Bounsom, V. (1999). Festival of Phuan, Sripathoum 1(2).

Charles, A. (1967). History of Ancient Xieng Khuang (LES ANNALES DE L' ANCIEN ROYAUME DE S'IENG KHWANG), Bulletin de l'École française d'Extrême-Orient.

Division of Research, OICT. (2001). History of Xieng Khuang Province, Vientiane capital press.

DPI. (2019). Population statistics, Xieng Khuang province.

Eng Writer. (1992). The Kingdoms of Laos, Vientiane, Laos

Lao Writer Press. (2012). Lao History and Memorial Movement in Laos, Vientiane capital.

Naotuayang, K. (2012). Thortu Yaxaiju and 52 Years of Haihin Revolution, Vientiane capital.

OICT of Khoun district. (2019). Tourism Statistics of Khoun district, Xieng Khuang province.

Samlamcheak, P. (1994). The Tale of Tai Phuan, Bangkok, Thailang

Samlamcheak, P. (1996). Heritage of Tai Phuan. Bangkok, Thailand.

Thepsimeuang, B. (2003). Maricle Jars of Xieng Khuang, Vientiane capital.

Thepsimeuang, B. (2006). History of Lao Ethnics (1st ed): THE LAO RACEVOLUME I.

Viravong, M. (2001). History of Laos : Ancient time-1946, National library, Vientiane capital, Laos.

Vongvichith, P. (2012). History of the City of Phuan, Lao Writer Press (2nd Ed). Serial no. 174-275/pd.

Vongvised, V. (2000). Tai Phuan, Hadsiow, Srisanalai district, Soukhothai province.



ກ. ແຜນຜັງລວມບ້ານຫີນໂງ່ນຄຸ້ມ 1



ຂ. ແຜນຜັງລວມບ້ານຫີນໂງ່ນຄຸ້ມຜັກແອກ



ຄ. ແຜນຜັງລວມບ້ານເມືອງ



ງ. ແຜນຜັງລວມບ້ານກາງນາ

ຮູບພາບທີ 1. ການຈັດວາງແຜນຜັງບ້ານໃນເຂດສຶກສາ



ຮູບພາບທີ 2. ລັກສະນະຮູບແບບຂອງເຮືອນມຸງດ້ວຍໄມ້ແປ້ນເກັດ





ຮູບພາບທີ 3. ລັກສະນະເຮືອນທູບກົ່ງຫຼັງຄາທີ່ມຸງດ້ວຍຫຍ້າ







ການນຳໃຊ້ພື້ນທີ່ພາຍໃນເຮືອນຄົວ ການນຳໃຊ້ພື້ນທີ່ຊານເຫົ້າ

ຮູບພາບທີ 5: ຮູບການຈັດສັນເຮືອນຄົວ



ຮູບພາບທີ 6. ຮູບລັກສະນະການນຳໃຊ້ພື້ນທີ່ກ້ອງຕະລ່າງເຮືອນ



ຮູບພາບທີ 7. ແຜນຜັງສະແດງການນຳໃຊ້ພື້ນທີ່ກ້ອງຕະລ່າງເຮືອນ